**BIÊN BẢN LÀM VIỆC**
**GIỮA ĐOÀN ĐẠI BIỂU TRƯỜNG ĐẠI HỌC TÂY BẮC - BỘ GIÁO DỤC VÀ ĐÀO TẠO NƯỚC CHXHCN VIỆT NAM**
**VÀ ĐOÀN ĐẠI BIỂU SỞ GIÁO DỤC VÀ THỂ THAO TỈNH NƯỚC CHDCND LÀO**

Căn cứ đề nghị của Sở Ngoại vụ tỉnh Sơn La, nước CHXHCN Việt Nam tại Công văn số 95/SNV-LS ngày 18 tháng 3 năm 2015. Sở Giáo dục và Thể thao tỉnh Xiêng Khoảng đã đón tiếp Đoàn đại biểu Trường Đại học Tây Bắc trong thời gian sang thăm và làm việc tại tỉnh Xiêng Khoảng từ ngày 3 - 5/4/2015.

Vào hồi 8h30' ngày 4 tháng 4 năm 2015, tại phòng họp Sở Giáo dục và Thể thao tỉnh Xiêng Khoảng, Đoàn đại biểu Trường Đại học Tây Bắc và Đoàn đại biểu Sở Giáo dục và Thể thao tỉnh Xiêng Khoảng đã tiến hành trao đổi và làm việc cùng nhau:

Trường Đại học Tây Bắc gồm: TS. Đoàn Đức Lân - Phó Hiệu trưởng; TS. Đỗ Hồng Đức - Trưởng phòng Đào tạo Đại học; TS. Vũ Trọng Lưỡng - Trưởng phòng Khoa học Công nghệ và Hợp tác quốc tế.

Sở Giáo dục và Thể thao tỉnh Xiêng Khoảng gồm: Ông Thong Phết In Thạ Xay – Phó Giám đốc Sở; Trưởng và phó các phòng chuyên môn: Phòng Hành chính, phòng Giáo dục Chuyên nghiệp, phòng Kế hoạch Thống kê, phòng Tổ chức Cán bộ, phòng Thể thao quần chúng, phòng Giáo dục phổ thông và phòng Phát triển sư phạm; chuyên viên Sở Ngoại vụ.

Tại buổi làm việc Hai đoàn đại biểu đã thông báo tóm tắt cho nhau về tình hình công tác giáo dục đào tạo của mỗi bên; trên cơ sở tôn trọng lẫn nhau, hai bên đã tiến hành bàn bạc và thống nhất ký kết Biên bản làm việc với nội dung cụ thể như sau:

1. Đồng ý tăng cường quan hệ hợp tác trong lĩnh vực giáo dục và đào tạo Lưu học sinh Lào.

2. Thống nhất quy trình tuyển sinh, thời gian thực hiện công tác tuyển sinh và công tác quản lý Lưu học sinh tại Trường Đại học Tây Bắc theo diện tự túc kinh phí theo quy trình đang thực hiện đối với Lưu học sinh Lào trong chương trình hợp tác giữa tỉnh Sơn La với tỉnh Xiêng Khoảng.

3. Lưu học sinh Lào khi sang Trường Đại học Tây Bắc học tập phải đảm bảo các điều kiện để được xét tuyển thẳng theo quy định của Bộ Giáo dục và Đào tạo nước CHXHCN Việt Nam đối với thí sinh là người nước ngoài.

4. Hai bên có trách nhiệm thường xuyên trao đổi thông tin về:

- Nhu cầu học tập của học sinh tỉnh Xiêng Khoảng tại Trường Đại học Tây Bắc.

- Ngành nghề đào tạo và khả năng tiếp nhận học sinh tỉnh Xiêng Khoảng của Trường Đại học Tây Bắc.

- Tình hình học tập, rèn luyện của Lưu học sinh của tỉnh Xiêng Khoảng tại Trường Đại học Tây Bắc.

5. Thống nhất mức kinh phí đối với Lưu học sinh tỉnh Xiêng Khoảng học tại Trường Đại học Tây Bắc theo diện tự túc bằng mức kinh phí đào tạo Lưu học sinh Lào trong chương trình hợp tác của tỉnh Sơn La với tỉnh Xiêng Khoảng giữ nguyên cho toàn khóa học (Bao gồm học phí, bảo hiểm Y tế, kiểm tra sức khỏe định kỳ, Ký túc xá, điện nước trong định mức).

6. Trường Đại học Tây Bắc mỗi năm dành 01 suất học bổng Đại học và 01 suất học bổng Sau đại học (Bao gồm học phí, bảo hiểm Y tế, kiểm tra sức khỏe định kỳ, Ký túc xá, điện nước trong định mức) cho Lưu học sinh Lào của Tỉnh Xiêng Khoảng sang học tập tại Trường (không kèm theo điều kiện ràng buộc nào đối với Sở Giáo dục và Thể thao Tỉnh Xiêng Khoảng).

7. Trong quá trình hợp tác đào tạo, nếu xuất hiện nhu cầu gặp gỡ, trao đổi đôi bên thì bên cử người tự chi trả kinh phí đi lại quốc tế, bên mời chịu trách nhiệm chi phí ăn, ở, đi lại nội địa.

8. Thống nhất đầu mối liên lạc, trao đổi thông tin như sau:

- Về phía Trường Đại học Tây Bắc: TS. Đỗ Hồng Đức - Trưởng phòng Đào tạo đại học, số điện thoại: 0084982.143.838, email: dohongduc2008@gmail.com, TS. Vũ Trọng Lưỡng - Trưởng phòng Khoa học công nghệ và Hợp tác quốc tế, số điện thoại: 0084915.158.759, email: vutrongluong@gmail.com.

- Về phía Sở Giáo dục và Thể thao tỉnh Xiêng Khoảng: Ông Loth BOUASAVANH – Trưởng phòng Giáo dục chuyên nghiệp, số điện thoại: 008562055473603, email: lothbouasavanh@yahoo.com.

9. Hai bên nhất trí trong thời gian tới sẽ ký kết Bản Thỏa thuận hợp tác dựa trên nội dung Biên bản làm việc này.

Biên bản này lập thành 4 bản bằng hai thứ tiếng (2 bản tiếng Việt, 2 bản tiếng Lào) có giá trị như nhau, mỗi bên giữ 01 bản tiếng Việt và 01 bản tiếng Lào. Buổi làm việc kết thúc vào hồi 11h00' cùng ngày, trên tinh thần hữu nghị đoàn kết đặc biệt.

| TRƯỞNG ĐOÀN ĐẠI BIỂU<br>SỞ GIÁO DỤC VÀ TT TỈNH XIÊNG KHOẢNG | TRƯỞNG ĐOÀN ĐẠI BIỂU<br>TRƯỜNG ĐẠI HỌC TÂY BẮC |
|---|---|
| Thong Phết In Thạ Xay | TS. Đoàn Đức Lân |

# ບົດບັນທຶກເຮັດວຽກ

## ລະຫວ່າງ

## ຄະນະຜູ້ແທນພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງ, ສປປ ລາວ

## ແລະ ຄະນະຜູ້ແທນໂຮງຮຽນມະຫາວິທະຍາໄລໄຕບັກ ກະຊວງສຶກສາທິການ ແລະ ກໍ່ສ້າງ, ສສ ຫວຽດນາມ.

ໂດຍຕອບສະໜອງຕາມໜັງສືສະເໜີຂອງພະແນກການຕ່າງປະເທດ ແຂວງເຊີນລາ ສສ ຫວຽດນາມ ສະບັບເລກທີ 95/SNV-LS, ລົງວັນທີ 18 ເດືອນ 3 ປີ 2015, ພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງ ຈຶ່ງໄດ້ຕ້ອນຮັບຄະນະຜູ້ແທນຂອງໂຮງຮຽນມະຫາວິທະຍາໄລໄຕບັກ ມາຢ້ຽມຢາມ ແລະ ເຮັດວຽກ ແຕ່ວັນທີ 3-5/4/2015.

ເວລາ 8:30 ຂອງວັນທີ 4/4/2015 ທີ່ຫ້ອງປະຊຸມພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງ, ຄະນະຜູ້ແທນພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງ ແລະ ຄະນະຜູ້ແທນໂຮງຮຽນມະຫາວິທະຍາໄລໄຕບັກ ໄດ້ພົບປະ ແລະ ເຮັດວຽກຮ່ວມກັນ.

ແຂວງຊຽງຂວາງ ມີ: ທ່ານ ທອງເພັດ ອິນທະໄຊ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ ພ້ອມ ບັນດາຫົວໜ້າ ຫລື ຮອງຂະແໜງບໍລິຫານ, ຂະແໜງອາຊີວະສຶກສາ, ຂະແໜງສະຖິຕິແຜນການ, ຂະແໜງຈັດຕັ້ງພະນັກງານ, ຂະແໜງກິລາມວນຊົນ, ຂະແໜງມັດທະຍົມ, ຂະແໜງພັດທະນາຄູ ແລະ ວິຊາການຂອງພະແນກການຕ່າງປະເທດ.

ໂຮງຮຽນມະຫາວິທະຍາໄລໄຕບັກ ມີ: ທ່ານ ດ.ຣ ດວານດິກເລິນ ຮອງອະທິການບໍດີມະຫາວິທະຍາໄລໄຕບັກ ພ້ອມ ທ່ານ ດຣ. ໂດ້ຮົ່ງດິກ ຫົວໜ້າຂະແໜງກໍ່ສ້າງປະລິນຍາຕີ, ທ່ານ ດຣ. ວູ້ຈອງເລື້ອງ ຫົວໜ້າຂະແໜງວິທະຍາສາດ-ເຕັກໂນໂລຢີ ແລະ ຮ່ວມມືສາກົນ, ທ່ານ ຮ່ວາງຕຸ່ງ ວິຊາການພະແນກການຕ່າງປະເທດ.

ໃນການພົບປະຄັ້ງນີ້ ຄະນະທັງສອງຝ່າຍໄດ້ແຈ້ງໃຫ້ກັນຊາບກ່ຽວກັບສະພາບການສຶກສາໂດຍຫຍໍ້ຂອງແຕ່ລະຝ່າຍ, ມີຄວາມເພິ່ງພໍໃຈ ເຄົາລົບນັບຖື ເຊິ່ງກັນ ແລະ ກັນ, ຄະນະທັງສອງໄດ້ປຶກສາຫາລື ແລະ ເປັນເອກະພາບບາງເນື້ອໃນທີ່ຈະເຊັນບົດບັນທຶກຮ່ວມມືຕໍ່ໜ້າ ລະອຽດດັ່ງນີ້:

1. ເຫັນດີເພີ່ມທະວີການຮ່ວມມືໃນຂົງເຂດການສຶກສາ ແລະ ກໍ່ສ້າງນັກສຶກສາລາວ.

2. ເປັນເອກະພາບລະບຽບຂັ້ນຕອນການຄັດເລືອກ, ໄລຍະເວລາຈັດຕັ້ງປະຕິບັດຮັບນັກຮຽນ ແລະ ວຽກງານຄຸ້ມຄອງນັກສຶກສາຢູ່ມະຫາວິທະຍາໄລໄຕບັກລະບົບຈ່າຍຄ່າຮຽນ(ທຶນສ່ວນຕົວ) ຕາມລະບຽບກຳນົດຂອງໂຮງຮຽນທີ່ກຳລັງປະຕິບັດຕໍ່ນັກສຶກສາລາວ ຕາມແຜນຮ່ວມມືລະຫວ່າງແຂວງຊຽງຂວາງ ກັບແຂວງເຊີນລາ.

3. ເມື່ອນັກສຶກສາລາວໄດ້ສົ່ງໄປສຶກສາຢູ່ໂຮງຮຽນມະຫາວິທະຍາໄລໄຕບັກ ຕ້ອງຮັບປະກັນບັນດາເງື່ອນໄຂເພື່ອຄັດເລືອກເຂົ້າຮຽນໂດຍບໍ່ຕ້ອງຜ່ານການສອບເສັງ (ສຳລັບນັກສຶກສາຕ່າງປະເທດ) ຕາມຂໍ້ກຳນົດຂອງກະຊວງສຶກສາທິການ ແລະ ກໍ່ສ້າງ ແຫ່ງ ສສ ຫວຽດນາມ.

4. ສອງຝ່າຍມີໜ້າທີ່ຮັບຜິດຊອບແລກປ່ຽນຂໍ້ມູນຂ່າວສານຢ່າງເປັນປົກກະຕິກ່ຽວກັບ:

- ຄວາມຕ້ອງການທາງດ້ານສຶກສາຂອງນັກຮຽນແຂວງຊຽງຂວາງຢູ່ໃນໂຮງຮຽນມະຫາວິທະຍາໄລໄຕບັກ.

- ຂະແໜງການກໍ່ສ້າງ ແລະ ຄວາມສາມາດຮັບນັກຮຽນແຂວງຊຽງຂວາງເຂົ້າຮຽນຢູ່ໂຮງຮຽນມະຫາວິທະຍາໄລໄຕບັກ.

- ສະພາບການຮຽນ, ການຝຶກຝົນຂອງນັກຮຽນແຂວງຊຽງຂວາງ ຢູ່ໂຮງຮຽນມະຫາວິທະຍາໄລໄຕບັກ.

5. ເອກະພາບຮັກສາຄ່າສິ້ນເປືອງຂອງແຕ່ລະຊຸດຮຽນ ລວມມີ: (ຄ່າຮຽນ, ຄ່າທີ່ພັກ, ຄ່າໄຟຟ້າ-ນ້ຳຕາມຂໍ້ກຳນົດຂອງໂຮງຮຽນ, ຄ່າປະກັນໄພສຸຂະພາບ ແລະ ຄ່າກວດສຸຂະພາບປະຈຳງວດ) ຈົນກ່ວາຮຽນຈົບ. ສຳລັບຄ່າສິ້ນເປືອງຂອງນັກສຶກສາແຂວງຊຽງຂວາງ ທີ່ຮຽນຢູ່ໂຮງຮຽນມະຫາວິທະຍາໄລໄຕບັກລະບົບທຶນນອກແຜນ(ທຶນສ່ວນຕົວ) ເທົ່າທຽມກັບຄ່າສິ້ນເປືອງຂອງນັກສຶກສາລາວລະບົບໃນແຜນ ຕາມແຜນການຮ່ວມມືລະຫວ່າງແຂວງຊຽງຂວາງ ກັບ ແຂວງເຊີນລາ.

6. ແຕ່ລະປີ ໂຮງຮຽນມະຫາວິທະຍາໄລໄຕບັກຈະໃຫ້ທຶນປະລິນຍາຕີ 01 ທຶນ ແລະ ຫລັງປະລິນຍາຕີ 01 ທຶນ (ຍົກເວັ້ນຄ່າຮຽນ, ຄ່າທີ່ພັກ, ຄ່າໄຟຟ້າ-ນ້ຳຕາມຂໍ້ກຳນົດນຳໃຊ້ຂອງໂຮງຮຽນ, ຄ່າປະກັນໄພສຸຂະພາບ ແລະ ຄ່າກວດສຸຂະພາບປະຈຳງວດ) ໃຫ້ແກ່ນັກສຶກສາແຂວງຊຽງຂວາງໄປສຶກສາຕໍ່ຢູ່ໂຮງຮຽນມະຫາວິທະຍາໄລໄຕບັກ.

7. ໃນການຈະຈັດຕັ້ງປະຕິບັດການຮ່ວມມືການສຶກສາ-ກໍ່ສ້າງໃນຕໍ່ໜ້າ, ຖ້າຫາກສອງຝ່າຍມີຄວາມຕ້ອງການພົບປະ, ແລກປ່ຽນນຳກັນ ແມ່ນຝ່າຍຖືກເຊີນຮັບຜິດຊອບງົບປະມານໄປມາ, ສ່ວນຝ່າຍເຊື້ອເຊີນຮັບຜິດຊອບງົບປະມານກິນຢູ່, ພັກເຊົາ ແລະ ການເຄື່ອນໄຫວໄປມາຢູ່ພາຍໃນທ້ອງຖິ່ນຂອງຕົນ.

8. ເອກະພາບແຕ່ງຕັ້ງຜູ້ປະສານງານແລກປ່ຽນຂໍ້ມູນຂ່າວສານດັ່ງນີ້:

- ພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງແມ່ນ: ທ່ານ ລົດ ບົວສະຫວັນ ຫົວໜ້າຂະແໜງອາຊີວະສຶກສາ, ເບີໂທ: 008562022950333, Email: lothbouasavanh@yahoo.com.

- ໂຮງຮຽນມະຫາວິທະຍາໄລໄຕບັກແມ່ນ: ທ່ານ ດຣ. ໂດ້ຮົ່ງດຶກ ຫົວໜ້າຂະແໜງກໍ່ສ້າງປະລິນຍາຕີ, ເບີໂທ: 00849821438378, Email: dohongduc2008@gmail.com ແລະ ທ່ານ ດຣ. ວູ້ຈອງເລື້ອງ ຫົວໜ້າຂະແໜງວິທະຍາສາດ-ເຕັກໂນໂລຢີ ແລະ ຮ່ວມມືສາກົນ, ເບີໂທ: 0084915158759, Email: vutrongluong@gmail.com.

9. ສອງຝ່າຍເຫັນດີຈະເຊັນບົດບັນທຶກການຮ່ວມມືໃນຕໍ່ໜ້າບົນພື້ນຖານເນື້ອໃນບົດບັນທຶກເຣັດວຽກສະບັບນີ້.

ບົດບັນທຶກສະບັບນີ້ໄດ້ສ້າງຂຶ້ນເປັນ 04 ສະບັບ( ພາສາລາວ 2 ສະບັບ, ພາສາຫວຽດນາມ 2 ສະບັບ) ລ້ວນແຕ່ມີຄຸນຄ່າເທົ່າທຽມກັນ. ແຕ່ລະຝ່າຍເກັບຮັກສາ ພາສາລາວ 01 ສະບັບ ແລະ ພາສາຫວຽດນາມ 01 ສະບັບ.

ກອງປະຊຸມພົບປະໄດ້ຈົບລົງດ້ວຍນ້ຳໃຈມິດຕະພາບແບບພິເສດ ເວລາ 11:00 ຂອງວັນດຽວກັນ

| ຫົວໜ້າຄະນະຜູ້ແທນພະແນກສຶກສາທິການ ແລະ ກິລາ ແຂວງຊຽງຂວາງ | ຫົວໜ້າຄະນະຜູ້ແທນມະຫາວິທະຍາໄລໄຕບັກ ແຂວງເຊີນລາ |
| --- | --- |
| ພະແນກ ສຶກສາທິການ ແລະກິລາ | TRƯỜNG ĐẠI HỌC TÂY BẮC |
| ທອງເພັດ ອິນທະໄຊ | ດ.ຣ ດວານດຶກເລີນ |